# ວັນສົມໂພດປາສກາ
# ປີພິທີກຳ B



**ພຣະວໍລະສານໂດຍນັກບຸນຢວງ 20, 1-9**

ແຕ່ເຊົ້າໆ, ມື້ຕົ້ນອາທິດ, ເວລາຍັງມືດຢູ່, ນາງມາຣີອາມັກດາເລນາໄປຄູຫາ ແລະເຫັນແຜ່ນຫີນຖືກຍົກອອກຈາກຄູຫາ. ນາງຈຶ່ງແລ່ນຫລົບເມືອຫາເປໂຕແລະສາວົກຜູ້ໜຶ່ງທີ່ພຣະເຢຊູເຈົ້າຊົງຮັກແພງ ບອກກັບເຂົາວ່າ: « ມີຄົນເອົາສົບພຣະອາຈານໄປແລ້ວ ບໍ່ຮູ້ວ່າເອົາໄປໄວ້ໃສ ».

ເປໂຕແລະສາວົກອີກຜູ້ໜຶ່ງຈຶ່ງອອກໄປເບິ່ງທີ່ຄູຫາ, ທັງສອງແລ່ນໄປ ແຕ່ສາວົກຜູ້ໜຶ່ງນັ້ນແລ່ນໄວກວ່າເປໂຕຈຶ່ງໄປຮອດຄູຫາກ່ອນ. ເຂົາກົ້ມລົງສ່ອງເບິ່ງ ເຫັນຜ້າຫໍ່ສົບວາງຢູ່ກັບດິນ, ແຕ່ບໍ່ໄດ້ເຂົ້າໄປທາງໃນ. ຊີມອນເປໂຕຜູ້ແລ່ນນຳຫລັງກໍມາຮອດ. ເພິ່ນເຂົ້າໄປໃນຄູຫາ ກໍເຫັນຜ້າຫໍ່ສົບວາງຢູ່ກັບດິນພ້ອມທັງຜ້າປົກໜ້າດ້ວຍ. ຜ້ານີ້ບໍ່ໄດ້ປົນກັບຜ້າຫໍ່ສົບ ແຕ່ພັບໄວ້ຢູ່ບ່ອນຕ່າງຫາກ. ແລ້ວສາວົກຜູ້ມາຮອດກ່ອນນັ້ນ ກໍເຂົ້າໃນຄູຫາ. ເພິ່ນໄດ້ເຫັນແລະເຊື່ອ. ຍ້ອນເຂົາຍັງບໍ່ທັນເຂົ້າໃຈພຣະຄຳພີທີ່ກ່າວວ່າ: « ພຣະອົງຈະຕ້ອງກັບເປັນຄືນມາຈາກພວກຜູ້ຕາຍ ».

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢອງ 20, 1-9**

ວັນນີ້ພວກເຮົາມາເຕົ້າໂຮມກັນເພື່ອສະຫລອງທັມລ້ຳເລີກແຫ່ງການກັບເປັນຄືນມາຈາກຄວາມຕາຍຂອງອົງພຣະເຢຊູກຣິສໂຕເຈົ້າ, ອັນແມ່ນເຫດການແຫ່ງຄວາມຊື່ນຊົມຍິນດີສຳລັບທຸກຄົນທີ່ເຊື່ອໃນພຣະອົງ. ແຕ່ເຫດການນີ້ຈະເປັນຄວາມຍິນດີທີ່ແທ້ຈິງສຳລັບພວກເຮົາ ກໍຕໍ່ເມື່ອພວກເຮົາໄດ້ພ້ອມກັບພຣະເຢຊູເຈົ້າຂ້າມຜ່ານຊ່ວງເວລາ 40 ວັນ, ຊຶ່ງພວກເຮົາຮຽກວ່າ: ກຳນົດບຳເພັນສີນ. ໄລຍະ 40 ວັນນີ້ ເປັນຊ່ວງແຫ່ງການລໍຖ້າ, ແຫ່ງການທົດສອບ, ແຫ່ງການປັບປ່ຽນຈິດໃຈ. ເພື່ອພວກເຮົາຈະໄດ້ກ້າວສູ່ອາທິດສັກສິດ, ອາທິດແຫ່ງມະຫາທໍລະມານພ້ອມກັບພຣະເຢຊູກຣິສໂຕເຈົ້າ. ແຕ່ເຫດການນີ້ບໍ່ໄດ້ຢຸດຢູ່ທີ່ວັນສຸກສັກສິດ, ຍ້ອນມີວັນເສົາສັກສິດ: ວັນແຫ່ງການຂ້າມຜ່ານຄວາມຕາຍໄປສູ່ຊີວິດ ແລະແນ່ນອນວັນແຫ່ງໄຊຊະນະ, ວັນແຫ່ງການກັບຄືນຊີບຂອງພຣະເຢຊູເຈົ້າ.

ເຫດການທີ່ກ່າວມາຂ້າງເທິງນີ້ ມີຄວາມກ່ຽວພັນຢ່າງໃດກັບຊີວິດຄວາມເຊື່ອຂອງພວກເຮົາ? ຖ້າພວກເຮົາຄິດພິດຈາລະນາ ແລະເບິ່ງຄືນຊີວິດຂອງຕົນແລ້ວ, ພວກເຮົາຈະເຫັນວ່າ ມື້ທີ່ພວກເຮົາເກີດມາມືນຕາເບິ່ງໂລກ ແມ່ນມື້ທີ່ພວກເຮົາກ້າວເຂົ້າສູ່ຊ່ວງເວລາ 40 ວັນ. ເປັນໄລຍະເວລາແຫ່ງການເຕີບໃຫຍ່, ການລໍຖ້າ, ການທົດສອບຂອງຊີວິດ. ຊ່ວງເວລາແຫ່ງອຸປະສັກ, ແຫ່ງຄວາມສິ້ນຫວັງ, ແຫ່ງຄວາມໂສກເສົ້າ, ແຫ່ງຄວາມທໍລະມານຍ້ອນພະຍາດໂລກາຕ່າງໆ. ແລະທ້າຍສຸດ, ແມ່ນເວລາແຫ່ງການຈາກໂລກນີ້ໄປຊຶ່ງເປັນສິ່ງທີ່ປາດສະຈາກບໍ່ໄດ້. ແຕ່ຄວາມຕາຍເປັນຄຳສຸດທ້າຍໃນຊີວິດຂອງພວກເຮົາບໍ? ແນ່ນອນວ່າ ບໍ່. ຍ້ອນຫຍັງ? ຍ້ອນພຣະເຢຊູເຈົ້າ ຜູ້ເປັນອ້າຍກົກແລະພໍ່ຂອງພວກເຮົາໄດ້ໄຊຊະນະຄວາມຕາຍແລ້ວ. ພຣະອົງໄດ້ກັບເປັນຄືນມາຈາກຄວາມຕາຍ. ແລະພວກເຮົາຜູ້ເຊື່ອໃນພຣະອົງ, ພວກເຮົາກໍຈະໄດ້ກັບເປັນຄືນມາ ເໝືອນດັ່ງພຣະອົງ. ນີ້ແຫລະແມ່ນຄວາມເຊື່ອຂອງພວກເຮົາ ແລະແມ່ນຄວາມເຊື່ອຂອງພະກຣິສຕະຈັກ ຊຶ່ງພວກເຮົາມີຄວາມພາກພູມໃຈປະກາດອອກມາໃນວັນທີ່ພວກເຮົາຮັບສິນລ້າງບາບ. ແລະເປັນຕົ້ນໃນຕອນແລງວັນເສົາປາສກາ, ວັນແຫ່ງການກັບເປັນຄືນມາຂອງພຣະເຢຊູເຈົ້າ. ແລະແຕ່ລະວັນອາທິດໃນມະຫາບູຊາມິຊຊາອັນແມ່ນທັມລ້ຳເລີກແຫ່ງການຕາຍແລະການກັບຄືນຊີບຂອງພຣະອົງ.

ຖ້າພວກເຮົາເຂົ້າໃຈຄວາມໝາຍຊີວິດຄວາມເຊື່ອຂອງພວກເຮົາອັນມີຮາກເຫງົ້າໃນຕົວຂອງພຣະກຣິສໂຕແລ້ວ. ຄວາມຍາກລຳບາກ, ຄວາມເຈັບປ່ວຍ, ຄວາມໂສກເສົ້າ ແລະຄວາມຕາຍໃນຊີວິດຂອງພວກເຮົາ ຈະມີຄວາມໝາຍແລະຈະກັບກາຍເປັນຄວາມຍິນດີ. ເພາະນັກບຸນເປົາໂລກ່າວວ່າ: *ຖ້າພວກເຮົາຮ່ວມທຸກນຳພຣະເຢຊູເຈົ້າ, ນຳພຣະອົງພວກເຮົາຈະຊື່ນຊົມຍິນດີ, ຖ້າພວກເຮົາຮ່ວມຕາຍນຳພຣະອົງ, ນຳພຣະອົງພວກເຮົາຈະມີຊີວິດ.*

ໃນວັນສົມໂພດປາສການີ້ໃຫ້ພວກເຮົາແຕ່ລະຄົນຖາມຕົວເອງວ່າ: ພຣະເຢຊູເຈົ້າໄດ້ກັບເປັນຄືນມາຈິງແທ້ໃນຊີວິດຂອງຂ້ອຍບໍ? ອັນໃດເປັນເຄື່ອງໝາຍແຫ່ງການກັບຄືນຊີບຂອງພຣະອົງໃນຊີວິດຂອງຂ້ອຍ? ເພື່ອຈະສາມາດຕອບຄຳຖາມເຫລົ່ານີ້ໄດ້ ໃຫ້ພວກເຮົາລະນຶກຄືນເຖິງສະພາບຊີວິດຂອງພວກສາວົກຂອງພຣະເຢຊູເຈົ້າຫລັງການຕາຍຂອງພຣະອົງ. ຫລັງຈາກການສິ້ນພຣະຊົນຂອງພຣະເຢຊູເຈົ້າ, ພວກສາວົກມີຄວາມຢ້ານກົວ ທໍ້ດທູ່, ສິ້ນຫວັງ, ພາກັນລີ້ຊ່ອນຢູ່ໃນຫ້ອງແລະປິດປະຕູໄວ້ໝົດ. ແຕ່ທັນໃດນັ້ນ, ພຣະເຢຊູເຈົ້າກໍປະຈັກມາຢູ່ທ່າມກາງພວກເຂົາແລະກ່າວວ່າ: *« ສັນຕິສຸກຈົ່ງມີແກ່ພວກເຈົ້າ »*. ຄຳເວົ້ານີ້ຂອງພຣະເຢຊູເຈົ້າມີຄວາມໝາຍແນວໃດ? ເປັນຫຍັງພຣະເຢຊູເຈົ້າບໍ່ກ່າວຄຳອື່ນ ແຕ່ເປັນຄຳວ່າສັນຕິສຸກຈົ່ງມີແກ່ພວກເຈົ້າ? ຍ້ອນວ່າສັນຕິສຸກທີ່ພຣະເຢຊູເຈົ້າກ່າວແກ່ພວກສາວົກນີ້ເປັນເຄື່ອງໝາຍແຫ່ງໄຊຊະນະຄວາມຕາຍຂອງພຣະອົງ. ເພາະຫລັງຈາກທີ່ພຣະເຢຊູເຈົ້າມອບສັນຕິສຸກໃຫ້ພວກສາວົກ ພຣະອົງກໍໃຫ້ພວກເຂົາເຫັນຮອຍແຜທີ່ພຣະຫັດ, ພຣະບາດ ແລະພຣະສີຂ້າງຂອງພຣະອົງ. ແລະພວກສາວົກກໍມີຄວາມຊື່ນຍິນດີ. ຈາກຄວາມຢ້ານກົວ, ຄວາມທໍ້ດທູ່, ຄວາມສິ້ນຫວັງທີ່ພວກເຂົາມີແຕ່ກ່ອນ ກໍໄດ້ກັບກາຍເປັນຄວາມຍິນດີ, ຄວາມຫວັງ ແລະຄວາມກ້າຫານ. ແຕ່ກ່ອນພວກເຂົາໄດ້ຂັງຕົວເອງໄວ້ໃນຫ້ອງມິດງຽບດຽວນີ້ພວກເຂົາໄດ້ເປີດໄຂດວງໃຈຂອງຕົນ ແລະອອກໄປເປັນພິຍານເຖິງພຣະເຢຊູເຈົ້າຜູ້ກັບຄືນຊີບຈາກຄວາມຕາຍໃຫ້ແກ່ນານາຊາດ.

ແຕ່ກ່ອນສັນຕິສຸກຂອງພຣະເຢຊູເຈົ້າໄດ້ປ່ຽນແປງຈິດໃຈຂອງພວກສາວົກໃຫ້ມີຄວາມຫວັງແລະຄວາມຍິນດີຢ່າງໃດ, ວັນນີ້ສັນຕິສຸກຂອງພຣະເຢຊູເຈົ້າກໍຈະປ່ຽນແປງຈິດໃຈຂອງພວກເຮົາແຕ່ລະຄົນທີ່ມາຊຸມນຸມກັນເພື່ອສະຫລອງປາສກາຂອງພຣະອົງເຊັ່ນດຽວກັນ.

ຂໍໃຫ້ສັນຕິສຸກຂອງພຣະເຢຊູເຈົ້າ ຈົ່ງຂັບໄລ່ຄວາມມືດ, ຄວາມໂສກເສົ້າ ແລະຄວາມສິ້ນຫວັງໃນດວງໃຈຂອງພວກເຮົາແຕ່ລະຄົນອອກໄປ. ເພື່ອວ່າຄວາມຍິນດີທີ່ແທ້ຈິງຂອງການກັບຄືນຊີບຂອງພຣະອົງຈະເປັນຄວາມຍິນດີຂອງພວກເຮົາແຕ່ລະຄົນດັ່ງດຽວກັນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ